**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງເຕັກໂນໂລຊີ ແລະ ການສື່ສານ

ຫ້ອງການ

ເລກທີ 1061 /ຫກ.5

ນະຄອນຫຼວງວຽງຈັນ, ວັນທີ 05 ມິຖຸນາ 2026

# ໜັງສືແຈ້ງເຊີນປະມູນ

1. ກະຊວງເຕັກໂນໂລຊີ ແລະ ການສື່ສານ ໂດຍຕາງໜ້າຫ້ອງການກະຊວງ ເຕັກໂນໂລຊີ ແລະ ການສື່ສານ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທິເໝາະສົມ ທີ່ດຳເນີນກິດດ້ານການສະໜອງອຸປກອນ ແລະ ຕິດຕັ້ງລະບົບກ້ອງວົງຈອນປິດຮັກສາຄວາມປອດໄພ ເຂົ້າຮ່ວມປະມູນການຈັດຊື້-ຈັດຈ້າງ ອຸປະກອນກ້ອງວົງຈອນປິດຮັກສາຄວາມປອດໄພສຳນັກງານກະຊວງເຕັກໂນໂລຊີ ແລະ ການສື່ສານ ປະຈຳປີ2026,ໄລຍະມອບ-ຮັບໂຄງການພາຍໃນ 75 ວັນ.
2. ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆ ບໍລິສັດທີ່ມີຄຸນນະວຸດທິເໝາະສົມ ແລະ ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດໝາຍທີ່ກ່ຽວພັນກັບການສະໜອງອຸປະກອນລະບົບກ້ອງວົງຈອນປິດ;
4. ບໍລິສັດໃດ ທີ່ຕ້ອງການຊື້ເອກະສານປະມູນຄົບຊຸດເປັນພາສາລາວ ໄດ້ທີ່ຫ້ອງການກະຊວງ ເຕັກໂນໂລຊີ ແລະ ການສື່ສານ (ພະແນກ ປະຊາສຳພັນ ແລະ ຂໍ້ມູນຂ່າວສານ), ຫ້ອງ 208 ຊັ້ນ 02, ທີ່ກະຊວງເຕັກໂນໂລຊີ ແລະ ການສື່ສານ (ເຂດສີສະເກດ), ເມືອງ: ຈັນທະບູລີ,ນະຄອນຫລວງວຽງຈັນ, ເບີໂທຕິດຕໍ່ 021 21254243, 020 55580553, 020 58969897 ຈະເລີ່ມຂາຍຊອງແຕ່ວັນທີ 08 ມິຖຸນາ 2026 ເຖິງວັນທີ 13 ກໍລະກົດ 2026 (ໃນໂມງລັດຖະການ), ໃນລາຄາ 2,000,000 ກີບ/ຊອງ (ສອງລ້ານກີບ), ຈຳນວນເງິນດັ່ງກ່າວນີ້ຈະບໍ່ໄດ້ມີການສົ່ງຄືນ ແລະ ວິທີການຊຳລະຕ້ອງຈ່າຍເປັນເງິນສົດ;
5. ຊອງປະມູນຕ້ອງສົ່ງກ່ອນເວລາ 09:00 ໂມງ ຂອງວັນທີ 13 ກໍລະກົດ 2026 ທີ່ຫ້ອງ 208 ຊັ້ນ 02, ກະຊວງເຕັກໂນໂລຊີ ແລະ ການສື່ສານ (ເຂດສີສະເກດ), ເມືອງ: ຈັນທະບູລີ,ນະຄອນຫລວງວຽງຈັນ. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆ ຊອງຈະໄດ້ເປີດໃນເວລາ 09:00 ໂມງ ຂອງ ວັນທີ 13 ກໍລະກົດ 2026 ໂດຍຊ້ອງໜ້າຄະນະການປະມູນ ແລະ ຕົວແທນຂອງຜູ້ປະມູນ;
6. ທຸກໆຊອງປະມູນຕ້ອງປະກອບການຄ້ຳປະກັນການປະມູນ ດ້ວຍເງິນສົດ ຫຼື ໜັງສືຄ້ຳປະກັນອອກໂດຍທະນາຄານ, ແຊັກ ບໍ່ໃຫ້ຫຼຸດ 2% (ສ່ວນຮ້ອຍ) ຂອງມູນຄ່າທີ່ສະເໜີ;

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາບໍລິສັດ/ຫ້າງຮ້ານ ທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນໃນຄັ້ງນີ້ດ້ວຍ.

**ຫົວໜ້າຫ້ອງການ**

ກະຊວງເຕັກໂນໂລຊີ ແລະ ການສື່ສານ

ຫ້ອງການ

ພອງປະເສີດ ແກ້ວສຸວັນ